**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

## ນາຍົກລັດຖະມົນຕີ

ນະຄອນຫຼວງວຽງຈັນ, ວັນທີ 23 ສິງຫາ 2023

ພະນະທ່ານ,

ໃນນາມລັດຖະບານ ແລະ ປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄໍາຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ພະນະທ່ານ ເນື່ອງໃນໂອກາດ ທີ່ໄດ້ຮັບເລືອກຕັ້ງໃຫ້ດໍາລົງຕໍາແໜ່ງ ເປັນນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ຄົນໃໝ່.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ດ້ວຍຄວາມສາມາດ ແລະ ປະສົບການທີ່ກວ້າງຂວາງຂອງ ພະນະທ່ານ ຣາຊະອານາຈັກໄທ ຈະສືບຕໍ່ມີຄວາມຈະເລີນກ້າວໜ້າ ແລະ ວັດທະນະຖາວອນຍິ່ງໆຂຶ້ນ. ຂ້າພະເຈົ້າ ຫວັງວ່າ ຈະໄດ້ເຮັດວຽກຮ່ວມກັບ ພະນະທ່ານ ເພື່ອສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມທີ່ມີມາແຕ່ດົນນານຖານປະເທດບ້ານໃກ້ເຮືອນຄຽງທີ່ດີ, ມີວັດທະນະທໍາ, ຮີດຄອງປະເພນີຄ້າຍຄືກັນ, ພາສາປາກເວົ້າເຂົ້າໃຈກັນ ແລະ ມີປະຫວັດສາດການພົວພັນການທູດນໍາກັນທີ່ຍາວນານຫຼາຍກວ່າ 7 ທົດສະວັດ ກໍ່ຄືການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງຂອງສອງປະເທດ. ຂ້າພະເຈົ້າ ຂໍຖືໂອກາດນີ້ ເຊື້ອເຊີນ ພະນະທ່ານ ເດີນທາງມາຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອປຶກສາຫາລືກ່ຽວກັບການສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືທີ່ມີມາແລ້ວນັ້ນໃຫ້ເຂົ້າສູ່ລວງເລິກ ເພື່ອພ້ອມກັນພັດທະນາປະເທດໃຫ້ມີຄວາມຮັ່ງມີເຂັ້ມແຂງ ແລະ ນໍາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ ແລະ ໄທ ໃຫ້ນັບມື້ນັບຫຼາຍຂຶ້ນ ກໍຄືເພື່ອສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາໃນຄອບຄົວອາຊຽນ, ພາກພື້ນ ແລະ ໃນໂລກ.

ຂ້າພະເຈົ້າ ຂໍຖືໂອກາດອັນສະຫງ່າລາສີນີ້ ອວຍພອນໄຊໃຫ້ ພະນະທ່ານ ແລະ ປະຊາຊົນໄທທຸກຖ້ວນໜ້າ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສໍາເລັດ ໃນໜ້າທີ່ອັນມີກຽດຂອງ ພະນະທ່ານ.

ດ້ວຍຄວາມນັບຖືຢ່າງສູງ.

ສອນໄຊ ສີພັນດອນ

ພະນະທ່ານ ເສດຖາ ທະວີສິນ
ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ
ທີ່ <u>ບາງກອກ</u>

**สาธารณรัฐประชาธิปไตยประชาชนลาว**
**สันติภาพ เอกราช ประชาธิปไตย เอกภาพ วัฒนาถาวร**

**นายกรัฐมนตรี**

นครหลวงเวียงจันทน์ วันที่ 23 สิงหาคม ค.ศ. 2023

ฯพณฯ

ในนามรัฐบาลและประชาชนแห่งสาธารณรัฐประชาธิปไตยประชาชนลาว และในนามส่วนตัว ข้าพเจ้าขอแสดงความยินดี และส่งคำอวยพรอันประเสริฐมายัง ฯพณฯ เนื่องในโอกาสที่ได้รับการเลือกตั้งให้ดำรงตำแหน่งนายกรัฐมนตรีแห่งราชอาณาจักรไทยคนใหม่

ข้าพเจ้าเชื่อมั่นว่า ด้วยความสามารถ และประสบการณ์ที่กว้างขวางของ ฯพณฯ ราชอาณาจักรไทยจะมีความเจริญก้าวหน้า และวัฒนาถาวรอย่างต่อเนื่อง ข้าพเจ้าหวังว่าจะได้ร่วมงานกับ ฯพณฯ เพื่อกระชับ และเสริมสร้างความสัมพันธ์มิตรภาพ และความร่วมมืออันดีงามที่มีมาอย่างยาวนาน ในฐานะประเทศบ้านใกล้เรือนเคียงที่ดีมีวัฒนธรรม จารีตประเพณีคล้ายคลึงกัน ภาษาพูดคุยเข้าใจกัน และมีประวัติศาสตร์ความสัมพันธ์ทางการทูตร่วมกันยาวนานมากกว่า 7 ทศวรรษ และเป็นหุ้นส่วนยุทธศาสตร์เพื่อการเจริญเติบโตและการพัฒนาอย่างยั่งยืนของสองประเทศ ข้าพเจ้าขอถือโอกาสนี้ เชิญ ฯพณฯ เดินทางมาเยือนสาธารณรัฐประชาธิปไตยประชาชนลาวเพื่อหารือเกี่ยวกับการเสริมสร้างความสัมพันธ์ที่มีอยู่ให้ครอบคลุมทุกมิติ เพื่อร่วมกันพัฒนาประเทศให้มีความมั่งมี เข้มแข็ง และเพื่อก่อให้เกิดผลประโยชน์อย่างเป็นรูปธรรมมาสู่ประชาชนสองชาติลาวและไทยให้ทวีคูณมากขึ้น เพื่อสันติภาพ เสถียรภาพ และความร่วมมือเพื่อการพัฒนาในครอบครัวอาเซียน ภูมิภาค และสากล

ข้าพเจ้า ขอถือโอกาสอันเป็นสิริมงคลนี้ อวยพรให้ ฯพณฯ และประชาชนไทยทุกหมู่เหล่า จงมีสุขภาพแข็งแรง มีความผาสุก และประสบความสำเร็จในหน้าที่อันมีเกียรติของ ฯพณฯ

ด้วยความนับถืออย่างสูง

(ลงนาม)
สอนไซ สีพันดอน

ฯพณฯ เศรษฐา ทวีสิน
นายกรัฐมนตรีแห่งราชอาณาจักรไทย
กรุงเทพมหานคร